# ຄະນະນຳທະນາຄານ

# ເຂົ້າອວຍພອນການນຳຂັ້ນສູງກະຊວງປ້ອງກັນປະເທດ




ໃນວັນທີ 18 ມັງກອນ 2012 ຜ່ານມານີ້ ທີ່ສະໂມສອນກະຊວງປ້ອງກັນປະເທດ ທ່ານ ພົນຕີ ແສງນວນ ໄຊຍະລາດ ເລຂາທິການສູນກາງພັກ, ລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນປະເທດ, ຫົວໜ້າກົມໃຫຍ່ການເມືອງກອງທັບ ໄດ້ໃຫ້ກຽດຕ້ອນຮັບການເຂົ້າອວຍພອນຂອງຄະນະພັກ-ຄະນະນຳທະນາຄານແຫ່ງ ສປປ ລາວ ແລະ ບັນດາທະນາຄານທຸລະກິດລັດ ເຊິ່ງນຳໂດຍທ່ານ ສົມພາວ ໄຟສິດ ເລຂາຄະນະພັກ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວຄົບຮອບ 63 ປີ (20 ມັງກອນ 1949 - 20 ມັງກອນ 2012) .

ໃນການເຂົ້າອວຍພອນຄັ້ງນີ້ ທ່ານ ສົມພາວ ໄຟສິດ ກໍໄດ້ຕາງໜ້າໃຫ້ພາກສ່ວນທະນາຄານມອບກະຕ່າດອກໄມ້-ຂອງຂວັນ ແລະ ເງິນຈຳນວນ 50 ລ້ານກີບ ພ້ອມທັງກ່າວແດງຄວາມຮູ້ບຸນຄຸນມາຍັງກອງທັບປະຊາຊົນລາວ ທີ່ໄດ້ອຸທິດເສຍສະຫຼະທຸກສິ່ງທຸກຢ່າງເພື່ອພາລະກິດກູ້ຊາດ, ການປົກປັກຮັກ

ສາ ແລະ ພັດທະນາປະເທດຊາດ, ໃນໂອກາດອັນສະຫງ່າລາສີນີ້ຄະນະນຳທະນາຄານຂໍອວຍພອນແດ່ນາຍ ແລະ ພົນທະຫານທັງໝົດຈົ່ງມີຄວາມຜາສຸກ-ປະສົບຜົນສຳເລັດທຸກໜ້າທີ່ວຽກງານ.

ໃນໂອກາດດັ່ງກ່າວ ທ່ານ ພົນຕີ ແສງນວນ ໄຊຍະລາດ ໄດ້ສະແດງຄວາມຂອບອົກຂອບໃຈຕໍ່ພາກສ່ວນດັ່ງກ່າວ ທີ່ໄດ້ນຳເອົາຄວາມອົບອຸ່ນ-ຄວາມສາມັກຄີຮັກແພງ ແລະ ພອນໄຊອັນປະເສີດມາອວຍພອນ ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 63 ປີ ເຊິ່ງມັນໄດ້ສະແດງເຖິງຄວາມເປັນຫ່ວງເປັນໃຍຕໍ່ນັກຮົບທີ່ພວມປະຕິບັດໜ້າທີ່ວຽກງານປ້ອງກັນປະເທດຊາດໃຫ້ມີຄວາມສະຫງົບຢູ່ໃນເຂດຫ່າງໄກສອກຫຼີກ, ເຂດພູຜາສູງຊັນ, ເຂດທຸລະກັນດານ, ເຂດຊາຍແດນ, ພ້ອມດຽວກັນນັ້ນທ່ານລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນປະເທດໄດ້ຕີລາຄາສູງຕໍ່ບົດບາດການເຄື່ອນໄຫວຂອງທະນາຄານຕໍ່ພາລະກິດປ້ອງກັນປະເທດ.